ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 3131/ທຄຕລ.2024
ນະຄອນຫຼວງວຽງຈັນ, ວັນທີ: 11 SEP 2024

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ/ຫ້າງຮ້ານ ຜະລິດປ້າຍໂຄສະນາ ແລະ ສິ່ງພິມ ຢູ່ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາ ຊຸດຂາຕັ້ງ QR Onepay.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາບໍລິສັດ/ຫ້າງຮ້ານຜະລິດປ້າຍໂຄສະນາ ແລະ ສິ່ງພິມ ເພື່ອເຂົ້າຮ່ວມການປະມູນລາຄາຊຸດ ຂາຕັ້ງ QR Onepay ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ຈຳນວນ / ຮູບພາບ |
|---|---|---|
| 1 | **ຂາຕັ້ງ One Pay:**<br>- ຖ້ານຕັ້ງໄມ້ 12(W) * 3(H) * 6(D) cm + ສະກູ໊ບ 1 ຈຸດ<br>- ແຜ່ນອະຄີລິກໃສສອງດ້ານ ສາມາດສອດເຈ້ຍໄດ້ ໜາ 2 mm / 12*19.5 cm<br>- ຢາງສີລີໂຄນ<br>- ພິມເຈ້ຍອາດມັນ 160gsm ພິມ 4 ສີ 1 ດ້ານ/ 12*19.5 cm<br>- ແຜ່ນສະຕິກເກີ້ໃສ ຕິດບາໂຄດ 10*10 cm<br>- ການຫຸ້ມຫໍ່: 50 ຊຸດ/ແກັດ, ພ້ອມລະບຸຕົວຢ່າງສິນຄ້າດ້ານນອກກ່ອງ | **50,000 ຊຸດ**<br> |

**ໝາຍເຫດ:**

1. ສາມາດເຂົ້າມາເບິ່ງຕົວຢ່າງແທ້ ຫຼື ຫາກຕ້ອງການຟາຍຮູບເພີ່ມຕື່ມ ສາມາດພົວພັນໄດ້ທີ່ ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ຊັ້ນ 4 ຕຶກ C ແຕ່ວັນນີ້ ຈົນເຖິງ 19/09/2024 ໃນໂມງລັດຖະການ.
2. ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຮ່ວມຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

- **ເອກະສານຊອງທີ 1:**

1. ປະກອບເອກະສານໃນນາມນິຕິບຸກຄົນ ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ, ໃບຢັ້ງຢືນການເສຍອາກອນປະຈຳປີ 2023.
2. ຜູ້ສະໜອງຕ້ອງລະບຸລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆໃຫ້ຄົບຖ້ວນ ແລະ ກົງກັບຄວາມຕ້ອງການ ໃນຕາຕະລາງຂ້າງເທິງນີ້, ແຫຼ່ງຜະລິດສິນຄ້າ, ລະບຸໄລຍະເວລາໃນການຮັບປະກັນ, ລະບຸໄລຍະການຜະລິດ, ຜົນງານຜ່ານມາທີ່ເຄີຍສະໜອງສິນຄ້າປະເພດດັ່ງກ່າວໃຫ້ພາກສ່ວນອື່ນ (ຕາມແບບຟອມຄັດຕິດແຈ້ງເຊີນ).

3. ເອກະສານເງື່ອນໄຂ ຂໍ້ 1 ແລະ 2 ແມ່ນ ສົ່ງຟາຍສະແກນເຂົ້າມາທີ່ Email: procurement@bcel.com.la ສ່ວນສິນຄ້າຕົວຢ່າງ ແມ່ນໃຫ້ມາສົ່ງກ່ອນ ວັນທີ 20/09/2024 ເວລາ 11:00 ໂມງ ທີ່ພະແນກຫ້ອງການ ບໍລິຫານ-ການເງິນ ຊັ້ນ 4 ຕຶກ C.

- **ເອກະສານຊອງທີ 2 (ປິດຊອງ)**:

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນວັນຄານ, ທີ **01/10/2024 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.
2. ໃບສະເໜີລາຄາໃຫ້ລະບຸລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ, ພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວ (Expire date) ຢ່າງໜ້ອຍ 20 ວັນລັດຖະການ.
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນປະເທດ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 01/11/2024) ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນ/ແຊັກດັ່ງກ່າວຄືນ.

**ໝາຍເຫດ**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງໄດ້ຜະລິດສິນຄ້າຕົວຈິງ 01 ອັນ ທີ່ຖືກຕ້ອງຕາມ Spec ທີ່ ທຄຕລ ລະບຸ ມາຜ່ານຕາມ Artwork ທີ່ ທຄຕລ ກຳນົດ ພາຍໃນ 14 ວັນ ແລະ ຕ້ອງມີຄວາມສາມາດຈັດສົ່ງສິນຄ້າ ຈຳນວນທັງໝົດສຳເລັດພາຍໃນ 30 ວັນລັດຖະການ ນັບຈາກມື້ຮອງຮັບແບບ ແລະ ໄດ້ຮັບໜັງສືສັ່ງຊື້.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (Server ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | .... ປີ | (ໃຫ້ລະບຸ) | | | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ:

# ປ້າຍຕັ້ງ













ດ້ານໜ້າ ດ້ານໂຄສະນາຮັບສາກົນ ດ້ານ

**ຮູບແບບປ້າຍ:** ເປັນແຜ່ນອະຄີລິກໃສສອງດ້ານ ສາມາດສອດເຈ້ຍ Artwork ໄດ້, ຖານຕັ້ງເປັນໄມ້ ພ້ອມສະກຣີນໂລໂກ້ ທຄຕລ